ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY

ບ້ານ ໜອງຄັນຄູ, ເມືອງ ນາຊາຍທອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 030 9882809, ແຟັກ:(856-21)

ເລກທີ: 032/ລອທ

ນະຄອນຫຼວງວຽງຈັນ, ວັນທີ 20 FEB 2026

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ແລະ ມື້ເປີດກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນຈຳປີ 2025.

- ອີງຕາມມະຕິກອງປະຊຸມສະພາບໍລິຫານຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ຄັ້ງທີ 1 ປະຈຳປີ 2026, ວັນທີ 20 ກຸມພາ 2026.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ຂໍຖືເປັນກຽດ ແຈ້ງມາຍັງທ່ານກ່ຽວກັບການກຳນົດມື້ປິດປຶ້ມ ບັນຊີຜູ້ຖືຮຸ້ນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ປະຈຳປີ 2025 ເຊິ່ງມີລາຍລະອຽດດັ່ງນີ້:

1. ມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ລອທ ກຳນົດເອົາວັນທີ 11 ມີນາ 2026 ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025.
2. ກຳນົດວັນຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2025 ແລະ ສະຖານທີ່ດັ່ງນີ້ :

- ວັນ ແລະ ເວລາ: 27 ເມສາ 2025, ເວລາ 15:00 – 17:00 ໂມງ
- ສະຖານທີ່: ຢູ່ທີ່ຕະຫຼາດຫຼັກຊັບລາວ, ຫ້ອງປະຊຸມຊັ້ນ 08, ບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນວຽງຈັນ, ສປປ ລາວ.
- ໂດຍມີວາລະການປະຊຸມດັ່ງນີ້:
  1) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກອງປະຊຸມຜູ້ຖືຮຸ້ນປະຈຳປີ 2024.
  2) ພິຈາລະນາ ແລະ ຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2025 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2025.
  3) ພິຈາລະນາ ແລະ ຮັບຮອງເອົາແຜນການດຳເນີນທຸລະກິດ ປະຈຳປີ 2026.
  4) ພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2025.
  5) ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2026.
  6) ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ.

7) ເລື່ອງອື່ນໆ (ຖ້າມີ).

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ

ດ້ວຍຄວາມນັບຖືເປັນຢ່າງສູງ

ຜູ້ອຳນວຍການໃຫຍ່



ປອ. ເສດ ພັດທະນະມາດ